ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ເລກທີ 493 / ທຫລ

ນະຄອນຫຼວງວຽງຈັນ, ວັນທີ 28 DEC 2016

# ແຈ້ງການ

**ເຖິງ:** ບັນດາທະນາຄານທຸລະກິດ ແລະ ສະຖາບັນການເງິນ,

**ເລື່ອງ:** ການໂອນເງິນເຂົ້າປະເທດຂອງທະນາຄານທຸລະກິດ ແລະ ສະຖາບັນການເງິນ.

- ອີງຕາມກົດໝາຍວ່າດ້ວຍທະນາຄານ ແຫ່ງ ສປປ ລາວ ສະບັບເລກທີ 05/ສພຊ, ລົງວັນທີ 14/10/1999;
- ອີງຕາມກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ສະບັບເລກທີ 55/ສພຊ, ລົງວັນທີ 22/12/ 2008;
- ອີງຕາມຂໍ້ຕົກລົງກ່ຽວກັບການໂອນເງິນເຂົ້າ-ອອກປະເທດຂອງທະນາຄານທຸລະກິດ ສະບັບເລກທີ: 433/ທຫລ, ລົງວັນທີ 06/06/2011.

**ຜູ້ວ່າການທະນາຄານແຫ່ງ ສປປ ລາວ ອອກແຈ້ງການ ດັ່ງນີ້:**

1. ທະນາຄານທຸລະກິດ ແລະ ສະຖາບັນການເງິນ ທີ່ຕ້ອງການໂອນເງິນຕາຕ່າງປະເທດ ທີ່ບໍ່ແມ່ນລາຍຮັບຈາກການສົ່ງອອກ ແລະ ການບໍລິການ ເຂົ້າບັນຊີຂອງຕົນທີ່ຝາກໄວ້ຢູ່ກົມບໍລິການທະນາຄານ ຕ້ອງປະຕິບັດດັ່ງນີ້:
   - ກໍານົດຈຸດປະສົງຂອງການໂອນເງິນເຂົ້າມາຢ່າງຈະແຈ້ງ;
   - ຂໍອະນຸຍາດການໂອນເງິນເຂົ້າມາ ຈາກກົມນະໂຍບາຍເງິນຕາ;
   - ເມື່ອຕ້ອງການນໍາໃຊ້ເງິນທີ່ໂອນເຂົ້າມາ, ທະນາຄານທຸລະກິດ ຕ້ອງຂໍອະນຸຍາດຈາກກົມຄຸ້ມຄອງທະນາຄານທຸລະກິດ; ສະຖາບັນການເງິນ ຕ້ອງຂໍອະນຸຍາດຈາກກົມຄຸ້ມຄອງສະຖາບັນການເງິນ;
   - ຖ້າເປັນເງິນກູ້ຢືມມາເພື່ອປ່ອຍຕໍ່, ທະນາຄານທຸລະກິດ ຕ້ອງສະເໜີຫາກົມຄຸ້ມຄອງທະນາຄານທຸລະກິດ; ສະຖາບັນການເງິນ ຕ້ອງສະເໜີຫາກົມຄຸ້ມຄອງສະຖາບັນການເງິນ ເພື່ອຄົ້ນຄວ້າ ແລະ ອະນຸມັດການໂອນເງິນເຂົ້າມາຕາມລະບຽບກໍານົດໄວ້.
2. ແຈ້ງການສະບັບນີ້ ໃຊ້ປ່ຽນແທນ ມາດຕາ 1 ໃນຂໍ້ຕົກລົງກ່ຽວກັບການໂອນເງິນເຂົ້າ-ອອກປະເທດຂອງທະນາຄານທຸລະກິດ ສະບັບເລກທີ: 433/ທຫລ, ລົງວັນທີ 06/06/2011, ມາດຕາອື່ນໆແມ່ນຍັງມີຜົນສັກສິດຕາມເດີມ.

ຜູ້ວ່າການທະນາຄານ ແຫ່ງ ສປປ ລາວ

ທະນາຄານແຫ່ງ ສປປ ລາວ ຜູ້ວ່າການ

ດຣ ສົມພາວ ໄຟສິດ

ທະນາຄານແຫ່ງ ສປປ ລາວ, ຖະໜົນ ຍອນເນ, ນະຄອນຫຼວງວຽງຈັນ, ຕູ້ໄປສະນີ 19, ໂທລະພິມ: 4304 BNL.VTE.LS
ໂທລະສານ: (856)-21-213108 ໂທລະສັບ: 213109-213110 Email: BOL@bol.gov.la; www.bol.gov.la